(Insert Date)

## ຂ່າວສຳຄັນກ່ຽວກັບການຄຸ້ມຄອງສຸຂະພາບຂອງທ່ານ

ຮຽນເຖິງ ຜູ້ທີ່ໄດ້ຮັບເງິນຊ່ວຍເຫຼືອ,

ຂ່າວດີ! ທ່ານອາດຈະໄດ້ຮັບຜົນປະໂຫຍດການດູແລສຸຂະພາບຫຼາຍຂຶ້ນໃນໄວໆນີ້. restricted scope Medi-Cal ຂອງທ່ານອາດຈະປ່ຽນເປັນ full scope Medi-Cal.

ເລີ່ມຕັ້ງແຕ່ **ວັນທີ່ 1 ພຶດສະພາ, 2022**, Older Adult Expansion ໃໝ່ຈະໃຫ້ full scope Medi-Cal ແກ່ຜູ້ໃຫຍ່ທີ່ມີອາຍຸ 50 ຂຶ້ນໄປ ແລະ ຜູ້ສູງອາຍຸທີ່ມີສິດໄດ້ຮັບ Medi-Cal.
ບໍ່ສຳຄັນວ່າສະຖານະການຄົນເຂົ້າເມືອງເປັນແນວໃດ.

**ຂ້ອຍຈະຮູ້ໄດ້ແນວໃດວ່າຂ້ອຍສາມາດໄດ້ຮັບຜົນປະໂຫຍດດ້ານການດູແລສຸຂະພາບຫຼາຍຂຶ້ນກັບ full scope Medi-Cal?**
ໃນເດືອນເມສາ ປີ 2022, ທ່ານຈະໄດ້ຮັບຈົດໝາຍໃນເມວ. ມັນຈະບອກທ່ານວ່າທ່ານສາມາດໄດ້ຮັບ full scope Medi-Cal. ມັນຍັງຈະບອກທ່ານວ່າເວລາໃດທີ່ທ່ານຈະເລີ່ມໄດ້ຮັບຜົນປະໂຫຍດຫຼາຍຂຶ້ນຕື່ມອີກ.

**ຂ້ອຍຈະໄດ້ຮັບການບໍລິການດູແລສຸຂະພາບ full scope Medi-Cal ຫຼາຍຂຶ້ນບໍ?**
ໄດ້. Medi-Cal ມີການດູແລສຸຂະພາບຟຣີ ຫຼື ຄ່າໃຊ້ຈ່າຍຕໍ່າ ສໍາລັບຜູ້ທີ່ອາໄສຢູ່ໃນ California ແລະ ມີສິດໄດ້ຮັບ. Full scope Medi-Cal ແມ່ນແຕກຕ່າງຈາກ restricted scope Medi-Cal ທີ່ທ່ານມີຕອນນີ້. Restricted scope Medi-Cal ພຽງແຕ່ຄຸ້ມຄອງບາງການບໍລິການເທົ່ານັ້ນ. ມັນບໍ່ຄຸ້ມຄອງສິ່ງຕ່າງໆເຊັ່ນ: ຢາ ແລະ ການດູແລປະຖົມພະຍາບານເບື້ອງຕົ້ນ.

Full scope Medi-Cal ຄຸ້ມຄອງການບໍລິການເຫຼົ່ານີ້ ແລະ ອື່ນໆອີກ:

- ການປິ່ນປົວດ້ວຍເຫຼົ້າ ແລະ ຢາ
- ການປິ່ນປົວແຂ້ວ
- ການປິ່ນປົວສຸກເສີນ
- ການວາງແຜນຄອບຄົວ
- ການປິ່ນປົວຕີນ

- ເຄື່ອງຊ່ວຍຟັງ
- ການດູແລທາງການແພດ
- ຢາທີ່ທ່ານໝໍຂອງທ່ານສັ່ງ
- ອຸປະກອນການແພດ
- ການດູແລສຸຂະພາບຈິດ
- ການດູແລຄົນເຈັບສ່ວນບຸກຄົນ ແລະ ການບໍລິການອື່ນໆ ທີ່ຊ່ວຍໃຫ້ປະຊາຊົນຢູ່ຫ່າງອອກຈາກເຮືອນພັກຄົນຊະລາ
- ການອ້າງອີງເຖິງຜູ້ຊ່ຽວຊານ, ຖ້າຫາກວ່າຈຳເປັນ
- ກວດສອບຄຳສັ່ງຂອງທ່ານໝໍ
- ການຮັບສົ່ງໄປຫາທ່ານໝໍ ແລະ ໝໍແຂ້ວ ແລະ ໄປຮັບຢາຂອງທ່ານຢູ່ຮ້ານຂາຍຢາ
- ການດູແລສາຍຕາ (ແວ່ນຕາ)

ຖ້າຫາກທ່ານມີບັນຫາກ່ຽວກັບການຖືພາທີ່ກ່ຽວຂ້ອງ Medi-Cal ໃນຕອນນີ້, ທ່ານມີບໍລິການທີ່ຈຳເປັນທາງດ້ານການປິ່ນປົວທັງໝົດທີ່ Medi-Cal ຄຸ້ມຄອງ.

ທ່ານສາມາດຮຽນຮູ້ເພີ່ມເຕີມກ່ຽວກັບ Medi-Cal ໃນ Frequently Asked Questions (FAQ) ທີ່ມາພ້ອມກັບຈົດໝາຍສະບັບນີ້.

**ຂ້ອຍຈະໄດ້ຮັບການບໍລິການດູແລສຸຂະພາບແນວໃດ?**

ຄົນສ່ວນໃຫຍ່ທີ່ມີ full scope Medi-Cal ຈະໄດ້ຮັບການບໍລິການດູແລສຸຂະພາບໂດຍຜ່ານ Medi-Cal Managed Care Plan. Medi-Cal Managed Care Plan ແມ່ນແຜນສຸຂະພາບ. ມັນເຮັດວຽກກັບທ່ານໝໍ, ໂຮງໝໍ, ຮ້ານຂາຍຢາ ແລະ ຜູ້ໃຫ້ບໍລິການດ້ານສຸຂະພາບອື່ນໆໃນພື້ນທີ່ບໍລິການຂອງແຜນການ. ພວກເຂົາຈະໃຫ້ບໍລິການດູແລສຸຂະພາບຂອງທ່ານ.

ໃນເວລາທີ່ທ່ານເຂົ້າຮ່ວມ Medi-Cal Managed Care Plan, ທ່ານອາດຈະຍັງໄດ້ຮັບການບໍລິການການດູແລສຸຂະພາບ ບາງຢ່າງໂດຍຜ່ານ Fee-For-Service (regular) Medi-Cal. ສິ່ງເຫຼົ່ານີ້ລວມມີຮ້ານຂາຍຢາ, ການປິ່ນປົວ substance use disorder ແລະ ບໍລິການປິ່ນປົວແຂ້ວ.

ການເລືອກແຜນ Medi-Cal Managed Care Plan ຂອງທ່ານ ແມ່ນຂຶ້ນກັບເຂດປົກຄອງທີ່ທ່ານອາໄສຢູ່. ບາງເຂດປົກຄອງມີແຜນການດຽວ. ບາງເຂດປົກຄອງມີຫຼາຍກວ່າໜຶ່ງແຜນໃຫ້ເລືອກ. ພວກເຮົາຈະສົ່ງຈົດໝາຍໃຫ້ທ່ານພ້ອມດ້ວຍການເລືອກແຜນຂອງທ່ານ. ທ່ານສາມາດຮຽນຮູ້ເພີ່ມເຕີມກ່ຽວກັບ Health Care Options ຂອງທ່ານ:

- **ທາງໂທລະສັບ:** ໂທ **1-800-430-4263**, ຕັ້ງແຕ່ວັນຈັນ-ວັນສຸກ, 8 ໂມງເຊົ້າຮອດ 6 ໂມງແລງ ຜູ້ໃຊ້ TDD/TYY ໂທຫາ 1-800-430-7077. ນີ້ແມ່ນໂທຟຣີ.

- **ທາງອອນລາຍ:** ໄປທີ່ https://www.healthcareoptions.dhcs.ca.gov/.

**ຂ້ອຍຈະໄດ້ບໍລິການດູແລສຸຂະພາບແນວໃດ ຖ້າຫາກຂ້ອຍມີ Medi-Cal ກັບ Share of Cost (SOC)?**
ຖ້າຫາກວ່າທ່ານມີ SOC ໃນຕອນນີ້, ທ່ານຈະໄດ້ຮັບ full scope Medi-Cal ພ້ອມກັບ SOC. ຖ້າຫາກວ່າທ່ານມີ SOC, ທ່ານຈະໄດ້ຮັບການບໍລິການການດູແລສຸຂະພາບຂອງທ່ານໂດຍຜ່ານ Fee-For-Service (regular) Medi-Cal. ທ່ານຈະບໍ່ຈຳເປັນຕ້ອງເລືອກ Medi-Cal Managed Care Plan.

**ຂ້ອຍຄວນຮັກສາ Medi-Cal Benefits Identification Card (BIC) ບໍ?**
ຄວນ. ທ່ານຄວນຮັກສາ BIC ຂອງທ່ານ. ມັນເປັນບັດພາດສະຕິກທີ່ມີດອກ poppy ສີສົ້ມ ຫຼື ການອອກແບບສີຟ້າ ແລະ ສີຂາວ. ທ່ານຈະຕ້ອງການມັນໃນເວລາທີ່ທ່ານໄດ້ຮັບ full scope Medi-Cal.
ໂທຫາຫ້ອງການປົກຄອງໃນພື້ນທີ່ຂອງທ່ານ ຖ້າຫາກວ່າທ່ານຕ້ອງການ BIC ອັນໃໝ່.

ເອົາບັດ BIC ໃຫ້ກັບທ່ານໝໍຂອງທ່ານເບິ່ງ ແລະ ການໄປປິ່ນປົວ ແລະ ປົວແຂ້ວອື່ນໆ. ເມື່ອທ່ານຢູ່ໃນ Medi-Cal Managed Care Plan, ທ່ານຈະໄດ້ຮັບບັດຈາກແຜນໃໝ່ຂອງທ່ານ.
ທ່ານຈະຈຳເປັນຕ້ອງໄດ້ສະແດງບັດທັງສອງໃນເວລາທີ່ທ່ານໄປຫາທ່ານໝໍ, ໝໍແຂ້ວ, ຮ້ານຂາຍຢາ ແລະ ຜູ້ໃຫ້ບໍລິການທາງການແພດອື່ນໆ.

**ຂ້ອຍຈຳເປັນຕ້ອງຕື່ມຂໍ້ມູນຄຳຮ້ອງສະໝັກ Medi-Cal ໃໝ່ບໍ?**
ບໍ່ຈຳເປັນ. ທ່ານໄດ້ຕື່ມໃສ່ restricted scope Medi-Cal ແລ້ວ, ດັ່ງນັ້ນທ່ານບໍ່ຈຳເປັນຕ້ອງຕື່ມຂໍ້ມູນໃສ່ໃນຄຳຮ້ອງສະໝັກໃໝ່ສຳລັບ full scope Medi-Cal.

ຖ້າຫາກທ່ານໄດ້ເອກະສານຂໍ້ມູນທາງໄປສະນີໃນການຕໍ່ອາຍຸ Medi-Cal ຂອງທ່ານ, ໃຫ້ຕື່ມຂໍ້ມູນໃສ່ ແລະ ສົ່ງກັບຄືນ. ທ່ານສາມາດໂທຫາຫ້ອງການເຂດປົກຄອງຂອງທ່ານ ເພື່ອຂໍຄວາມຊ່ວຍເຫຼືອ.

**ຂ້ອຍຈະເອົາເອກະສານຂໍ້ມູນໃນຮູບແບບທີ່ແຕກຕ່າງກັນໄດ້ແນວໃດ?**
ທ່ານສາມາດຮ້ອງຂໍໃຫ້ມີຂໍ້ມູນລາຍລັກອັກສອນທັງໝົດກ່ຽວກັບ Medi-Cal ຂອງທ່ານ ຜົນປະໂຫຍດໃນຮູບແບບທີ່ແຕກຕ່າງກັນ. ຮູບແບບສາມາດເປັນອັກສອນນູນ, ພິມໃຫຍ່, ສຽງ ຫຼື ຂໍ້ມູນ CD ຫຼື ບາງຮູບແບບອື່ນໆເພື່ອຊ່ວຍໃຫ້ທ່ານເຂົ້າໃຈ ແລະ ອ່ານຕົວອັກສອນ ຫຼື ຕື່ມຂໍ້ມູນໃສ່ຊຸດຂອງທ່ານ. ເພື່ອຮ້ອງຂໍສິ່ງນີ້, ທ່ານສາມາດ:

- ໄປທີ່ https://afs.dhcs.ca.gov. ປະຕິບັດຕາມຄຳແນະນຳ ເພື່ອເລືອກຮູບແບບທີ່ແຕກຕ່າງກັນ.
- ໂທ **1-833-284-0040** (California Relay 711), ຕັ້ງແຕ່ວັນຈັນ - ວັນສຸກ, 8 ໂມງເຊົ້າຮອດ 5 ໂມງແລງ, ຍົກເວັ້ນວັນພັກແຫ່ງຊາດ. ນີ້ແມ່ນໂທຟຣີ.
- ຕິດຕໍ່ຫ້ອງການເຂດປົກຄອງທ້ອງຖິ່ນຂອງທ່ານ.

**ຈະເຮັດແນວໃດຖ້າຂ້ອຍຕ້ອງການຄວາມຊ່ວຍເຫຼືອເປັນພາສາອື່ນ?**

ຖ້າຫາກທ່ານຕ້ອງການຄວາມຊ່ວຍເຫຼືອເປັນພາສາອື່ນທີ່ນອກເໜືອໄປຈາກພາສາອັງກິດ, ກະລຸນາອ່ານລາຍຊື່ເບີໂທລະສັບສຳລັບການບໍລິການຊ່ວຍເຫຼືອທາງພາສາທີ່ມາພ້ອມກັບຈົດໝາຍສະບັບນີ້. ທ່ານຍັງສາມາດໄດ້ຮັບນາຍພາສາເພື່ອຊ່ວຍທ່ານອ່ານຈົດໝາຍສະບັບນີ້.

## ຂ້ອຍຈະຮຽນຮູ້ເພີ່ມເຕີມ ຫຼື ຂໍຄວາມຊ່ວຍເຫຼືອໄດ້ແນວໃດ?

**ເພື່ອຮຽນຮູ້ເພີ່ມເຕີມກ່ຽວກັບ Medi-Cal:**
ໂທຫາສາຍຄວາມຊ່ວຍເຫຼືອຂອງ Department of Health Care Services (DHCS) Medi-Cal ທີ່ **1-800-541-5555**, ຕັ້ງແຕ່ ວັນຈັນ - ວັນສຸກ, 8 ໂມງເຊົ້າຮອດ 5 ໂມງແລງ, ຍົກເວັ້ນວັນພັກແຫ່ງຊາດ. ນີ້ແມ່ນໂທຟຣີ.

**ເພື່ອຮຽນຮູ້ກ່ຽວກັບ Medi-Cal Managed Care Plans:**
ໂທ Health Care Options ທີ່ **1-800-430-4263**, ຕັ້ງແຕ່ວັນຈັນ-ວັນສຸກ, 8 ໂມງເຊົ້າຮອດ 6 ໂມງແລງ ຜູ້ໃຊ້ TDD/TYY ໂທຫາ 1-800-430-7077. ນີ້ແມ່ນໂທຟຣີ.

ຫຼື ໄປທີ່ເວັບໄຊທ໌ຂອງ DHCS ທີ່ https://bit.ly/older-adult-expansion.

**ສຳລັບຄຳຖາມກ່ຽວກັບການເຂົ້າເມືອງ ແລະ ໂຄງການ Medi-Cal:**
Department of Health Care Services (DHCS) ບໍ່ສາມາດຕອບຄຳຖາມກ່ຽວກັບການເຂົ້າເມືອງ ຫຼື "public charge” ໄດ້.

California Department of Social Services (CDSS) ໃຫ້ທຶນໃຫ້ແກ່ອົງການບໍ່ຫວັງຜົນກຳໄລທີ່ມີຄຸນວຸດທິເພື່ອໃຫ້ບໍລິການແກ່ຄົນເຂົ້າເມືອງທີ່ອາໄສຢູ່ California. ມີບັນຊີລາຍຊື່ຂອງອົງການດັ່ງກ່າວທີ່ https://bit.ly/immigration-service-contractors.

ສຳລັບຂໍ້ມູນຄົນເຂົ້າເມືອງ ແລະ ການຊວ່ຍເຫຼືອ, ໃຫ້ໄປທີ່ California’s Immigrant Guide ທີ່ https://immigrantguide.ca.gov/.

ເພື່ອຮຽນຮູ້ກ່ຽວກັບ public charge, ໄປທີ່ຄຳແນະນຳ California Health and Human Services Agency Public Charge ທີ່ https://bit.ly/calhhs-public-charge-guide.

ຂອບໃຈ!

Department of Health Care Services